**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 02 /ສປສສ

ນະຄອນຫຼວງວຽງຈັນ, ວັນທີ 29/ 01 /2014

# ຄໍາແນະນໍາ

## ຂອງປະທານສານປະຊາຊົນສູງສຸດ

**ເຖິງ:** ບັນດາ ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ບັນດາປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານທຸກຂັ້ນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ການກວດຄົ້ນກ່ອນເຂົ້າຫ້ອງປະຊຸມສານ

**ອີງຕາມ** ມາດຕາ 38 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

**ອີງຕາມ** ມາດຕາ 172 ແລະ 173 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ມາດຕາ 218 ແລະ 220 ຂອງ ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012.

ໃນໄລຍະຜ່ານມາ ເຫັນວ່າ ການປະຕິບັດລະບຽບຂອງຫ້ອງປະຊຸມສານ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ ຊຶ່ງອາດຈະເກີດບັນຫາທີ່ຕາມມາ. ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພ ໃນທີ່ປະຊຸມສານຕ້ອງມີການກວດຄົ້ນຫາຊັບສິ່ງຂອງທີ່ຕ້ອງຫ້າມ ກ່ອນຈະອະນຸຍາດໃຫ້ເຂົ້າຮ່ວມໃນທີ່ປະຊຸມສານ.

**ປະທານສານປະຊາຊົນສູງສຸດ ອອກຄໍາແນະນໍາ ດັ່ງນີ້:**

1. ໃຫ້ມີຜູ້ຮັບຜິດຊອບກວດຄົ້ນບັນດາຜູ້ທີ່ຈະເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອຊອກຫາວັດຖຸທີ່ຕ້ອງຫ້າມ ເປັນຕົ້ນ ອາວຸດ, ວັດຖຸທີ່ແຫຼມຄົມ, ທາດເຄມີ, ເຊື້ອໄຟ, ເຄື່ອງບັນທຶກພາບ, ສຽງ ແລະ ອື່ນໆ ຕາມທີ່ກໍານົດໄວ້ໃນລະບຽບປະຊຸມສານ;
2. ຖ້າການກວດຄົ້ນຫາກພົບເຫັນວັດຖຸສິ່ງຂອງທີ່ຕ້ອງຫ້າມ ໃຫ້ຜູ້ຮັບຜິດຊອບກວດຄົ້ນນັ້ນ ເກັບຮັກສາໄວ້ ພ້ອມທັງເຮັດບົດບັນທຶກມອບ-ຮັບ ເປັນສອງສະບັບ ໜຶ່ງສະບັບໃຫ້ຜູ້ກ່ຽວຂ້ອງ ແລະ ອີກໜຶ່ງສະບັບເກັບໄວ້ເປັນຫລັກຖານ;

ໃນກໍລະນີ ພົບເຫັນວັດຖຸສິ່ງຂອງ ທີ່ສົງໄສວ່າ ເປັນການຄອບຄອງທີ່ບໍ່ຖືກຕ້ອງ ໃຫ້ລາຍງານຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ຜູ້ທີ່ເຂົ້າຮ່ວມໃນທີ່ປະຊຸມສານ ຕ້ອງນຸ່ງຊຸດພົນລະເຮືອນ ແຕ່ໃນກໍລະນີໄດ້ໃສ່ເຄື່ອງແບບມາແລ້ວບໍ່ໃຫ້ຕິດເຄື່ອງໝາຍ ຫຼື ຍົດຊັ້ນ, ຍົກເວັ້ນເຈົ້າໜ້າທີ່ກ່ຽວຂ້ອງທີ່ໄດ້ຮັບອະນຸຍາດຈາກສານ;
4. ການກວດຄົ້ນ ຜູ້ທີ່ຈະເຂົ້າຮ່ວມປະຊຸມສານ ຕ້ອງໃຫ້ເປັນເພດດຽວກັນກັບຜູ້ຖືກກວດຄົ້ນ;
5. ຖ້າຜູ້ເຂົ້າຮ່ວມ ຫາກບໍ່ປະຕິບັດຕາມຄໍາແນະນໍາສະບັບນີ້ ຈະບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນທີ່ປະຊຸມສານ.

ເມື່ອໄດ້ຮັບຄໍາແນະນໍາສະບັບນີ້ແລ້ວ ຈຶ່ງນໍາໄປຄົ້ນຄວ້າ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຜ່ານການຈັດຕັ້ງປະຕິບັດຖ້າມີບັນຫາໃດບໍ່ຈະແຈ້ງ ຫຼື ພົບຄວາມຫຍຸ້ງຍາກ ໃຫ້ລາຍງານໄປຍັງສານປະຊາຊົນສູງສຸດ ເພື່ອພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ

ຄໍາພັນ ສິດທິດໍາພາ

ບ່ອນສົ່ງ:

- ຄະນະປະຈໍາສະພາແຫ່ງຊາດ 1 ສະບັບ (ເພື່ອລາຍງານ)
- ຫົວໜ້າອົງການໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອຊາບ);
- ກະຊວງຍຸຕິທໍາ 1 ສະບັບ(ເພື່ອຊາບ);
- ບັນດາຄະນະສານ ຂອງສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ປະຕິບັດ);
- ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າ-ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອປະຕິບັດ);
- ສໍາເນົາໄວ້ 2 ສະບັບ.